ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3807/ກປ
ນະຄອນຫຼວງວຽງຈັນ, ວັນທີ 19 JUL 2024

# ຂໍ້ຕົກລົງ
# ວ່າດ້ວຍ ກາໝາຍຄຸນນະພາບ ຜະລິດຕະພັນສັດ ແລະ ສັດນໍ້າ

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍ ສັດນໍ້າ ແລະ ການປະມົງ (ສະບັບປັບປຸງ) ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 2308/ກລປ, ລົງວັນທີ 12 ມິຖຸນາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2123/ຫກ, ລົງວັນທີ 25 ມິຖຸນາ 2024.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນຳໃຊ້ກາໝາຍຄຸນນະພາບ ຂອງຜະລິດຕະພັນສັດ ແລະ ສັດນໍ້າ ເພື່ອຍົກລະດັບຄຸນນະພາບ ແລະ ຄວາມປອດໄພ ໃຫ້ໄດ້ມາດຕະຖານ ແນໃສ່ຮັບປະກັນການສະໜອງອາຫານ ທີ່ມີຄຸນຄ່າທາງດ້ານໂພຊະນາການ ໃຫ້ແກ່ຜູ້ບໍລິໂພກ ປະກອບສ່ວນເຂົ້າໃນການສົ່ງເສີມການຄ້າ ສຳລັບ ຜະລິດຕະພັນສັດ ແລະ ສັດນໍ້າ ໃຫ້ສາມາດເຂົ້າເຖິງຕະຫຼາດສາກົນ.

**ມາດຕາ 2 ກາໝາຍຄຸນນະພາບ ຜະລິດຕະພັນສັດ ແລະ ສັດນໍ້າ**

ກາໝາຍຄຸນນະພາບ ຜະລິດຕະພັນສັດ ແລະ ສັດນໍ້າ ຂຽນຫຍໍ້ວ່າ: "ກຄຜສ" ແມ່ນເຄື່ອງໝາຍ ທີ່ສ້າງຂຶ້ນ ໂດຍອີງການຄຸ້ມຄອງ ວຽກງານລ້ຽງສັດ ແລະ ສັດຕະວະແພດ ເພື່ອບົ່ງບອກໃຫ້ຜູ້ບໍລິໂພກສາມາດຈຳແນກໄດ້ວ່າ ຜະລິດຕະພັນສັດ ແລະ ສັດນໍ້າ ນັ້ນ ມີຄຸນນະພາບ ແລະ ປອດໄພກວ່າ ຜະລິດຕະພັນສັດ ແລະ ສັດນໍ້າທົ່ວໄປ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜະລິດຕະພັນສັດ** ໝາຍເຖິງ ຜົນຜະລິດທີ່ໄດ້ມາຈາກອະໄວຍະວະຂອງສັດ ເປັນຕົ້ນ ຊາກສັດ, ຊີ້ນ, ນົມ, ໄຂ່, ເຄື່ອງໃນ, ນ້ຳເຜີ້ງ ແລະ ຜະລິດຕະພັນສັດທີ່ປຸງແຕ່ງຂັ້ນຕົ້ນ;
2. **ຜະລິດຕະພັນສັດນ້ຳ** ໝາຍເຖິງ ຜົນຜະລິດ ທີ່ໄດ້ມາຈາກ ສັດນ້ຳ ເປັນຕົ້ນ ຊາກສັດນ້ຳ, ຊີ້ນ, ໄຂ່ປາສົດ ແລະ ຜະລິດຕະພັນສັດນ້ຳ ທີ່ປຸງແຕ່ງຂັ້ນຕົ້ນ;
3. **ຕ່ອງໂສ້ການຜະລິດອາຫານ** ໝາຍເຖິງຂະບວນການການຜະລິດອາຫານ ໂດຍເລີ່ມຈາກ ການຜະລິດ ຫຼື ຈັດຫາວັດຖຸດິບ, ການຂົນສົ່ງ, ການປຸງແຕ່ງຂັ້ນຕົ້ນ, ການເກັບຮັກສາ, ການຈຳໜ່າຍ ຈົນເຖິງການປຸງແຕ່ງເປັນອາຫານພ້ອມທີ່ຈະບໍລິໂພກ;
4. **ການວິເຄາະສິ່ງເປັນອັນຕະລາຍ ແລະ ຄວບຄຸມຈຸດວິກິດ (HACCP)** ໝາຍເຖິງ ມາດຕະຖານການຜະລິດ ທີ່ມີລະບົບ ການກຳນົດ, ປະເມີນຜົນ ແລະ ຄວບຄຸມ ຈຸດອັນຕະລາຍ ຕໍ່ຄວາມປອດໄພຂອງອາຫານ ເພື່ອຮັບປະກັນສຸຂະພາບຂອງຜູ້ບໍລິໂພກ;
5. **ການສືບຍ້ອນຫຼັງ(Traceability)** ໝາຍເຖິງ ລະບົບການບັນທຶກ ແລະ ຕິດຕາມຂໍ້ມູນຂອງຜະລິດຕະພັນໃດໜຶ່ງ ເລີ່ມຈາກຂອດການຜະລິດ, ປຸງແຕ່ງ, ເກັບຮັກສາ ແລະ ຈຳໜ່າຍ ຈົນເຖິງຜູ້ບໍລິໂພກ ເພື່ອຄວາມສະດວກ ໃນການສືບຍ້ອນຫຼັງປະຫວັດຂອງຜະລິດຕະພັນ;
6. **ຜະລິດຕະພັນທີ່ໄດ້ຮັບການຢັ້ງຢືນ** ໝາຍເຖິງ ຜະລິດຕະພັນສັດ ແລະ ສັດນ້ຳ ທີ່ໄດ້ຜ່ານການກວດກາທາງດ້ານວິຊາການແລ້ວ.

**ມາດຕາ 4 ຫຼັກການ ກ່ຽວກັບ ວຽກງານກາໝາຍຄຸນນະພາບ ຜະລິດຕະພັນສັດ ແລະ ສັດນ້ຳ**

ວຽກງານກາໝາຍຄຸນນະພາບ ຜະລິດຕະພັນສັດ ແລະ ສັດນ້ຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບ ກົດໝາຍ, ນະໂຍບາຍ ແລະ ລະບຽບການ ຂອງ ສປປ ລາວ;
2. ມີຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
3. ຮັບປະກັນ ບໍ່ສ້າງສິ່ງກີດຂວາງທີ່ບໍ່ຈຳເປັນ ຕໍ່ການຄ້າ ແລະ ບໍ່ເລືອກປະຕິບັດ;
4. ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບ ການດຳເນີນທຸລະກິດ ທີ່ກ່ຽວຂ້ອງກັບ ຕ່ອງໂສ້ການຜະລິດອາຫານ ທີ່ມີແຫຼ່ງກຳເນີດມາຈາກ ສັດ ແລະ ສັດນ້ຳ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງ, ການກວດກາ ແລະ ອອກໃບຢັ້ງຢືນການນຳໃຊ້ ກຄຜສ

**ມາດຕາ 6 ອົງການສ້າງ ກຄຜສ**

ກຄຜສ ສ້າງຂຶ້ນໂດຍ ກົມລ້ຽງສັດ ແລະ ການປະມົງ ຊຶ່ງ ຮັບຮອງ ແລະ ປະກາດໃຊ້ ໂດຍລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

### ມາດຕາ 7 ເງື່ອນໄຂຜູ້ສະເໜີຂໍນຳໃຊ້ ກຄຜສ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສະເໜີຂໍນຳໃຊ້ ກຄຜສ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ;
2. ໄດ້ຮັບອະນຸຍາດ ດຳເນີນທຸລະກິດ ກ່ຽວກັບ ຜະລິດຕະພັນສັດ ຫຼື ສັດນ້ຳ ຈາກ ຂະແໜງການກະສິກຳ ແລະ ປ່າໄມ້;
3. ມີລາຍການຜະລິດຕະພັນສັດ ຫຼື ສັດນ້ຳ ທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ;
4. ໄດ້ຮັບລະຫັດທີ່ຕັ້ງຂອງສະຖານທີ່ການຜະລິດ ຢູ່ໃນລະບົບຂໍ້ມູນເອເລັກໂຕຣນິກດ້ານຄວາມປອດໄພ ອາຫານ ຂອງກົມລ້ຽງສັດ ແລະ ການປະມົງ;
5. ຜະລິດຕະພັນ ມີແຫຼ່ງກຳເນີດມາຈາກຟາມທີ່ໄດ້ມາດຕະຖານ ຂອງ ກົມລ້ຽງສັດ ແລະ ການປະມົງ;
6. ເງື່ອນໄຂອື່ນ ທີ່ຈຳເປັນ ຕາມການກຳນົດ ຂອງກົມລ້ຽງສັດ ແລະ ການປະມົງ.

### ມາດຕາ 8 ການຂໍນຳໃຊ້ ກຄຜສ

ບຸກຄົນ, ນິຕິບຸກຄົນທີ່ມີຈຸດປະສົງ ສະເໜີຂໍນຳໃຊ້ ກຄຜສ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານຄົບຊຸດ ຕໍ່ ກົມລ້ຽງສັດ ແລະ ການປະມົງ.

### ມາດຕາ 9 ເອກະສານປະກອບຂໍນຳໃຊ້ ກຄຜສ

ເອກະສານປະກອບຂໍນຳໃຊ້ ກຄຜສ ມີ ດັ່ງນີ້:

1. ໃບຄຳຮ້ອງຂໍນຳໃຊ້ ກຄຜສ ຕາມແບບພິມ ທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບອະນຸຍາດດຳເນີນທຸລະກິດ ດ້ານກະສິກຳ ແລະ ປ່າໄມ້;
4. ເອກະສານ ແຈ້ງຄຸນລັກສະນະສະເພາະທາງດ້ານເຕັກນິກ ຂອງຜະລິດຕະພັນ ສັດ ແລະ ສັດນ້ຳ ທີ່ ສະເໜີຂໍນຳໃຊ້ກາໝາຍ;
5. ເອກະສານອື່ນທີ່ກ່ຽວຂ້ອງ ຕາມການກຳນົດ ຂອງກົມລ້ຽງສັດ ແລະ ການປະມົງ.

### ມາດຕາ 10 ການກວດກາກ່ອນອອກໃບຢັ້ງຢືນ ການນຳໃຊ້ ກຄຜສ

ພາຍຫຼັງ ກົມລ້ຽງສັດ ແລະ ການປະມົງ ໄດ້ຮັບສຳນວນເອກະສານຂໍນຳໃຊ້ ກຄຜສ ຄົບຖ້ວນແລ້ວ ໃຫ້ດຳເນີນ ການກວດກາ ດັ່ງນີ້:

1. ກວດກາຄວາມຖືກຕ້ອງ ຂອງເອກະສານທີ່ກ່ຽວຂ້ອງ;
2. ກວດກາສະຖານທີ່ຜະລິດ ຕາມແບບພິມການກວດກາ ທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ;
3. ເກັບຕົວຢ່າງ ແລະ ດຳເນີນການວິໄຈຕາມຫຼັກວິຊາການ;
4. ສະຫຼຸບ ຜົນການກວດກາ ຢ່າງເປັນລາຍລັກອັກສອນ.

### ມາດຕາ 11 ການພິຈາລະນາອອກໃບຢັ້ງຢືນ ການນຳໃຊ້ ກຄຜສ

ໂດຍອີງໃສ່ຜົນຂອງການກວດກາ ຖ້າຫາກຂໍ້ມູນທັງໝົດຖືກຕ້ອງ ກົມລ້ຽງສັດ ແລະ ການປະມົງ ຕ້ອງ ອອກໃບຢັ້ງຢືນ ການນຳໃຊ້ ກຄຜສ ເປັນລາຍລັກອັກສອນ ຕາມແບບພິມທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ ພ້ອມທັງມອບແບບພິມ ກາໝາຍເອເລັກໂຕຣນິກ ໃຫ້ແກ່ຜູ້ສະເໜີພາຍໃນ ຫ້າວັນ ລັດຖະການ.

ໃນກໍລະນີ ທີ່ບໍ່ສາມາດອອກ ໃບຢັ້ງຢືນການນຳໃຊ້ ກຄຜສ ໃຫ້ໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນ ລາຍລັກອັກສອນ ໃຫ້ແກ່ຜູ້ສະເໜີຮັບຊາບ.

**ມາດຕາ 12 ການນຳໃຊ້ ກຄຜສ**

ໃບຢັ້ງຢືນການນຳໃຊ້ ກຄຜສ ມີອາຍຸການນຳໃຊ້ ສອງປີ ນັບແຕ່ວັນທີ່ໄດ້ຮັບການອະນຸຍາດ ແລະ ບໍ່ສາມາດຕໍ່ອາຍຸໄດ້. ຖ້າມີຈຸດປະສົງຈະນຳໃຊ້ຕໍ່ໄປອີກ ຕ້ອງໄດ້ດຳເນີນຕາມຂັ້ນຕອນ ການຂໍນຳໃຊ້ ກຄຜສ ໃໝ່.

ຜູ້ທີ່ໄດ້ຮັບ ໃບຢັ້ງຢືນການນຳໃຊ້ກາໝາຍ ສາມາດຕິດ ກຄຜສ ໃສ່ສິ່ງຫຸ້ມຫໍ່, ກ່ອງ, ພາຊະນະບັນຈຸ, ເອກະສານກຳກັບສິນຄ້າ, ເຄື່ອງມືອຸປະກອນ ກ່ຽວກັບ ການຕະຫຼາດ ລວມທັງ ການໂຄສະນາ ຜ່ານສື່ຕ່າງໆ ແລະ ຂາຍອອນລາຍ.

ກຄຜສ ບໍ່ສາມາດນຳໃຊ້ໄດ້ ໃນກໍລະນີ ດັ່ງນີ້:

1. ໃບຢັ້ງຢືນ ການນຳໃຊ້ ກຄຜສ ໝົດອາຍຸ;
2. ຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ ກຄຜສ ຖືກສັ່ງໂຈະ ຫຼື ຍົກເລີກ ການນຳໃຊ້ ກຄຜສ ຫຼື ໃຫ້ຢຸດເຊົາກິດຈະການ;
3. ຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ ກຄຜສ ຂໍຍົກເລີກສິດນຳໃຊ້.

**ມາດຕາ 13 ຄ່າທຳນຽມ ແລະ ຄ່າບໍລິການ**

ຜູ້ຂໍນຳໃຊ້ ກຄຜສ ຕ້ອງຈ່າຍ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ກ່ຽວຂ້ອງກັບ ການກວດກາສະຖານທີ່ ການວິໄຈຕົວຢ່າງ ລວມທັງ ຄ່າແບບພິມ ຕາມລະບຽບການ.

ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ປະຕິບັດຕາມ ລັດຖະບັນຍັດ ຂອງປະທານປະເທດ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

**ມາດຕາ 14 ຮູບແບບ ແລະ ຄວາມໝາຍຂອງ ກຄຜສ**

ກຄຜສ ມີ ສອງ ຮູບແບບ ດັ່ງນີ້:

1. ກາໝາຍຄຸນນະພາບດີ ແມ່ນສັນຍາລັກ ໃຊ້ສຳລັບຕິດໃສ່ ຜະລິດຕະພັນສັດ ຫຼື ສັດນ້ຳ ທີ່ມີຄຸນນະພາບ ໄດ້ຕາມຂໍ້ຮຽກຮ້ອງ ທີ່ຈຳເປັນພື້ນຖານ ທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ;
2. ກາໝາຍຄຸນນະພາບດີເລີດ ແມ່ນສັນຍາລັກ ໃຊ້ສຳລັບຕິດໃສ່ ຜະລິດຕະພັນສັດ ຫຼື ສັດນ້ຳ ທີ່ມີຄຸນນະພາບ ໄດ້ຕາມຂໍ້ຮຽກຮ້ອງ ທີ່ຈຳເປັນພື້ນຖານ ແລະ ຂໍ້ແນະນຳເພີ່ມເຕີມ ທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ.

ກຄຜສ ແຕ່ລະຊະນິດ ຫຼື ປະເພດ ຕ້ອງອອກແບບ ແລະ ກຳນົດຄວາມໝາຍ ຂອງສັນຍາລັກ ໂດຍ ກົມລ້ຽງສັດ ແລະ ການປະມົງ ແລະ ຮັບຮອງປະກາດໃຊ້ ຢ່າງເປັນທາງການ ຈາກກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 15 ການຂໍໃບຢັ້ງຢືນການນຳໃຊ້ ກຄຜສ ຄືນໃໝ່**

ຜູ້ທີ່ໄດ້ຮັບ ໃບຢັ້ງຢືນການນຳໃຊ້ ກຄຜສ ສາມາດຂໍ ໃບຢັ້ງຢືນການນຳໃຊ້ ກຄຜສ ຄືນໃໝ່ ໃນກໍລະນີ ດັ່ງນີ້:

1. ໃບຢັ້ງຢືນ ການນຳໃຊ້ ກຄຜສ ກ່ອນຈະໝົດອາຍຸການນຳໃຊ້ ຢ່າງໜ້ອຍ ສາມເດືອນ;
2. ໃບຢັ້ງຢືນ ເສຍຫາຍ ຫຼື ຈີກຂາດ;
3. ມີການປັບປຸງປ່ຽນແປງ ຂະບວນການ ການຜະລິດ.

**ມາດຕາ 16 ການໂຈະ ໃບຢັ້ງຢືນການນຳໃຊ້ ກຄຜສ**

ໃບຢັ້ງຢືນການນຳໃຊ້ ກຄຜສ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ທີ່ໄດ້ຮັບ ໃບຢັ້ງຢືນການນຳໃຊ້ ກຄຜສ ສະເໜີໂຈະການນຳໃຊ້ກາໝາຍ ດ້ວຍຕົນເອງ;

2. ກວດພົບການນຳໃຊ້ ກຄຜສ ໃນຈຸດປະສົງອື່ນ ທີ່ບໍ່ຖືກຕ້ອງຕາມການຢັ້ງຢືນ;
3. ກວດພົບຜະລິດຕະພັນທີ່ຕິດກາໝາຍ ບໍ່ໄດ້ຕາມມາດຕະຖານ ແຕ່ບໍ່ມີຜົນກະທົບຮ້າຍແຮງ ຕໍ່ຜູ້ບໍລິໂພກ.

ກົມລ້ຽງສັດ ແລະ ການປະມົງ ຕ້ອງແຈ້ງເປັນລາຍລັກອັກສອນ ກ່ຽວກັບ ການໂຈະການນຳໃຊ້ ກຄຜສ, ຂໍ້ບົກພ່ອງ ແລະ ກຳນົດໄລຍະເວລາ ເພື່ອປັບປຸງແກ້ໄຂ ໃຫ້ຜູ້ປະກອບການ ຊາບ.

ໃນໄລຍະເວລາ ການໂຈະການນຳໃຊ້ ກຄຜສ ຜູ້ປະກອບການ ສາມາດຜະລິດ ຜະລິດຕະພັນໄດ້ ແຕ່ບໍ່ອະນຸຍາດຕິດ ກຄຜສ ຈົນກວ່າຈະໄດ້ມີການປັບປຸງແກ້ໄຂ ແລະ ໄດ້ຮັບແຈ້ງການຍົກເລີກການໂຈະ ຈາກ ກົມລ້ຽງສັດ ແລະ ການປະມົງ ຢ່າງເປັນລາຍລັກອັກສອນ.

**ມາດຕາ 17 ການຍົກເລີກ ໃບຢັ້ງຢືນການນຳໃຊ້ ກຄຜສ**

ໃບຢັ້ງຢືນການນຳໃຊ້ ກຄຜສ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ທີ່ໄດ້ຮັບ ໃບຢັ້ງຢືນການນຳໃຊ້ ກຄຜສ ສະເໜີຂໍຍົກເລີກ ການນຳໃຊ້ ກຄຜສ ດ້ວຍຕົນເອງ;
2. ບໍ່ມີການປັບປຸງ ຫຼື ແກ້ໄຂ ພາຍໃນເວລາກຳນົດ ຕາມທີ່ລະບຸໄວ້ ໃນໃບແຈ້ງໂຈະ;
3. ນຳໃຊ້ໃບຢັ້ງຢືນ ບໍ່ຖືກຕ້ອງ ຫຼື ລະເມີດຂໍ້ຫ້າມ ເປັນອາຈິນ;
4. ຜະລິດຕະພັນ ມີຜົນກະທົບ ຕໍ່ສຸຂະພາບ ຂອງຜູ້ບໍລິໂພກ ແບບຮ້າຍແຮງ, ຈຳນວນຫຼາຍ ແລະ ເປັນວົງກວ້າງ;
5. ມີການມອບ, ໂອນ ຫຼື ໃຫ້ຜູ້ອື່ນ ທີ່ບໍ່ໄດ້ຮັບອະນຸຍາດ ຜະລິດ ຜະລິດຕະພັນສັດ ຫຼື ສັດນ້ຳນຳໃຊ້ ກຄຜສ ຂອງຕົນເອງ.

ກົມລ້ຽງສັດ ແລະ ການປະມົງ ຕ້ອງລຶບຊື່ຜະລິດຕະພັນສັດ ຫຼື ສັດນ້ຳ ອອກຈາກບັນຊີ ທີ່ໄດ້ຮັບໃບຢັ້ງຢືນການນຳໃຊ້ ກຄຜສ ແລະ ແຈ້ງຜ່ານສື່ຕ່າງໆ ໃຫ້ສາທາລະນະຊົນ ຮັບຊາບ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ປະກອບການ ແລະ ຜູ້ບໍລິໂພກ

**ມາດຕາ 18 ສິດ ແລະ ພັນທະ ຂອງຜູ້ປະກອບການ**

ຜູ້ປະກອບການ ມີສິດ ແລະ ພັນທະ ດັ່ງນີ້:

1. ຕິດ ກຄຜສ ໃສ່ສິ່ງຫຸ້ມຫໍ່, ກ່ອງ, ພາຊະນະບັນຈຸ, ເອກະສານກຳກັບສິນຄ້າ, ເຄື່ອງມືອຸປະກອນ ກ່ຽວກັບ ການຕະຫຼາດ ລວມທັງ ການໂຄສະນາຜ່ານສື່ຕ່າງໆ;
2. ຮ້ອງຟ້ອງ ໃນກໍລະນີ ຜະລິດຕະພັນສັດ ຫຼື ສັດນ້ຳທີ່ມີ ກຄຜສ ຂອງຕົນ ຖືກບຸກຄົນ, ນິຕິບຸກຄົນອື່ນ ປອມແປງ ຫຼື ໃສ່ຮ້າຍປ້າຍສີ ຕໍ່ຜະລິດຕະພັນ ທີ່ໄດ້ຕິດ ກຄຜສ ຂອງຕົນ;
3. ໂຄສະນາເຜີຍແຜ່ ຜະລິດຕະພັນ ທີ່ມີ ກຄຜສ ຂອງຕົນຕາມຄວາມເປັນຈິງ ໃຫ້ແກ່ ສາທາລະນະຊົນ ຮັບຊາບ ໂດຍຜ່ານສື່ໂຄສະນາຕ່າງໆ;
4. ແຈ້ງ ໃຫ້ໜ່ວຍງານທີ່ກ່ຽວຂ້ອງຊາບ ໃນກໍລະນີທີ່ມີການປ່ຽນແປງສູດ ຫຼື ຂະບວນການຜະລິດ ຫຼື ພົບບັນຫາ ກ່ຽວກັບ ຄວາມປອດໄພ ແລະ ຄຸນນະພາບຂອງຜະລິດຕະພັນ ຫຼື ເກີດຂໍ້ຂັດແຍ່ງ ກ່ຽວກັບ ກຄຜສ ກັບ ຄູ່ຄ້າ, ຜູ້ບໍລິໂພກ ຫຼື ໄດ້ຮັບການແຈ້ງ ກ່ຽວກັບ ບັນຫາໃດໜຶ່ງ ຈາກອົງການຄຸ້ມຄອງ ທີ່ກ່ຽວຂ້ອງ;
5. ປະຕິບັດຕາມຂັ້ນຕອນ ແລະ ວິທີການ ທີ່ໄດ້ກຳນົດໄວ້ໃນເອກະສານ ແລະ ຕ້ອງໄດ້ຂໍອະນຸຍາດ ນຳໃຊ້ ກຄຜສ ໃໝ່ ຖ້າມີການປ່ຽນແປງຂັ້ນຕອນ ຫຼື ວິທີການຜະລິດ ຫຼື ປຸງແຕ່ງ;
6. ມີຄວາມຮັບຜິດຊອບຕໍ່ ຄວາມປອດໄພ ແລະ ຄຸນນະພາບ ຂອງຜະລິດຕະພັນຂອງຕົນ;

7. ປະຕິບັດຕາມ ບັນດາກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບ ຕ່ອງໂສ້ອາຫານ ຢ່າງຄົບຖ້ວນ ທຸກຂັ້ນຕອນ;
8. ກວດກາຄຸນນະພາບ ຜະລິດຕະພັນຂອງຕົນ ຢ່າງເປັນປົກກະຕິ;
9. ດໍາເນີນ ລະບົບການກວດກາພາຍໃນ, ການວິເຄາະສິ່ງເປັນອັນຕະລາຍ ແລະ ຄວບຄຸມຈຸດວິກິດ (HACCP), ການສືບຢ້ອນຫຼັງ ແລະ ປະຕິບັດຫຼັກການ ປ້ອງກັນຄວາມປອດໄພໄວ້ກ່ອນ;
10. ອໍານວຍຄວາມສະດວກ ແລະ ໃຫ້ການຮ່ວມມືແກ່ ກົມລ້ຽງສັດ ແລະ ການປະມົງ ໃນການດໍາເນີນ ການສຸ່ມກວດກາ;
11. ນໍາໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ພັນທະ ຂອງຜູ້ບໍລິໂພກ**

ຜູ້ບໍລິໂພກ ມີສິດ ແລະ ພັນທະ ດັ່ງນີ້:

1. ຮ້ອງຟ້ອງ ໃນກໍລະນີພົບ ຜະລິດຕະພັນສັດ ຫຼື ສັດນໍ້າ ທີ່ມີ ກຄຜສ ບໍ່ໄດ້ມາດຕະຖານ ທີ່ກໍານົດ;
2. ລາຍງານ ກໍລະນີພົບເຫັນ ຜະລິດຕະພັນສັດ ຫຼື ສັດນໍ້າ ທີ່ມີ ກຄຜສ ມີການປອມແປງ ຫຼື ນໍາໃຊ້ ກຄຜສ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ນໍາໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມ ສໍາລັບ ຜູ້ປະກອບການ**

ຫ້າມ ຜູ້ທີ່ໄດ້ຮັບ ໃບຢັ້ງຢືນນໍາໃຊ້ ກຄຜສ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ ກຄຜສ ທີ່ບໍ່ໄດ້ຮັບ ໃບອະນຸຍາດນໍາໃຊ້ ກຄຜສ ເພື່ອການຕະຫຼາດ ສໍາລັບ ຜະລິດຕະພັນຕົນເອງ;
2. ຜະລິດ ຜະລິດຕະພັນ ຢູ່ສະຖານທີ່ ທີ່ບໍ່ໄດ້ຮັບອະນຸຍາດຕາມ ໃບຢັ້ງຢືນການນໍາໃຊ້ ກຄຜສ;
3. ປ່ຽນສູດຜະລິດ, ແຫຼ່ງທີ່ມາ ແລະ ປະເພດວັດຖຸດິບ ຂອງຜະລິດຕະພັນ, ລວມທັງ ການປ່ຽນແປງ ຂະບວນການ ການຜະລິດ ໂດຍຍັງບໍ່ໄດ້ຮັບ ໃບຢັ້ງຢືນການນໍາໃຊ້ ກຄຜສ ໃໝ່;
4. ຜະລິດ ຜະລິດຕະພັນ ທີ່ບໍ່ປອດໄພ ຫຼື ຖືກຍົກເລີກ ໃບຢັ້ງຢືນການນໍາໃຊ້ ກຄຜສ;
5. ຕິດ ກຄຜສ ໃສ່ຜະລິດຕະພັນສັດ ຫຼື ສັດນໍ້າ ອື່ນທີ່ບໍ່ໄດ້ມາດຕະຖານ;
6. ໂອນ ຫຼື ໃຫ້ເຊົ່າ ໃບຢັ້ງຢືນການນໍາໃຊ້ ກຄຜສ;
7. ມອບ ກຄຜສ ໃຫ້ຜູ້ອື່ນນໍາໃຊ້ກັບ ຜະລິດຕະພັນທີ່ບໍ່ໄດ້ຮັບອະນຸຍາດ;
8. ນໍາໃຊ້ສານທີ່ເປັນອັນຕະລາຍ ຫຼື ສານທີ່ຕ້ອງຫ້າມ ປະສົມລົງໃນ ຜະລິດຕະພັນສັດ ຫຼື ສັດນໍ້າ ທີ່ໄດ້ຮັບ ກຄຜສ;
9. ຕິດ ກຄຜສ ໃສ່ພາຊະນະບັນຈຸ ທີ່ບໍ່ປອດໄພ ຫຼື ບໍ່ເໝາະສົມ;
10. ປອມແປງ ຫຼື ໃສ່ຮ້າຍປ້າຍສີ ການນໍາໃຊ້ ກຄຜສ ເພື່ອຜົນປະໂຫຍດທາງດ້ານເສດຖະກິດ ຫຼື ສ້າງຄວາມເສຍຫາຍ ໃຫ້ແກ່ຊື່ສຽງ ຂອງຜູ້ປະກອບການອື່ນ;
11. ໂຄສະນາ ຜະລິດຕະພັນສັດ ຫຼື ສັດນໍ້າ ທີ່ຕິດ ກຄຜສ ເກີນຄວາມເປັນຈິງ;
12. ຫຼົບຫຼີກ, ປົກເປືອຍ, ປະຕິເສດຄວາມຮັບຜິດຊອບ ຫຼື ເຊື່ອງອໍາ ການກວດກາ ຂອງເຈົ້າໜ້າທີ່;
13. ໃຫ້ສິນບົນແກ່ພະນັກງານ;
14. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 21 ຂໍ້ຫ້າມ ສໍາລັບ ພະນັກງານ-ລັດຖະກອນ**

ຫ້າມ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດ ໃຫ້ແກ່ ສ່ວນຕົວ, ຄອບຄົວ, ຍາດຕິພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມ ປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທໍາລາຍເອກະສານ;
5. ຮຽກເອົາ ຄ່າທໍານຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ເປີດເຜີຍຄວາມລັບ ຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ບິດເບືອນຄວາມຈິງ, ປິດບັງ, ຊຸກເຊື່ອງ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບ ຜູ້ກະທໍາຜິດ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 22 ອົງການຄຸ້ມຄອງ ແລະ ກວດກາ**

ອົງການຄຸ້ມຄອງ ແລະ ກວດກາ ກຄຜສ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ແລະ ອົງການຄຸ້ມຄອງວຽກງານສັດນໍ້າ ແລະ ການປະມົງ ຊຶ່ງປະກອບດ້ວຍ:

1. ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້;
2. ຂະແໜງລ້ຽງສັດ ແລະ ການປະມົງ, ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ;
3. ໜ່ວຍງານລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກົມລ້ຽງສັດ ແລະ ການປະມົງ**

ໃນການຄຸ້ມຄອງ ແລະ ກວດກາ ກຄຜສ ກົມລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ ຕາມ ຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ໂຄສະນາເຜີຍແຜ່ ນິຕິກໍາ, ບົດແນະນໍາ, ມາດຕະຖານເຕັກນິກ, ມາດຕະຖານ ການປະຕິບັດງານ (SOPs) ແລະ ລະບຽບການ ກ່ຽວກັບ ວຽກງານ ກຄຜສ ເພື່ອສະເໜີ ກະຊວງ ກະສິກໍາ ແລະ ປ່າໄມ້ ພິຈາລະນາຮັບຮອງປະກາດໃຊ້ ແລະ ຈັດຕັ້ງປະຕິບັດ;
2. ອອກ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນການນໍາໃຊ້ ກຄຜສ;
3. ສ້າງ, ຄຸ້ມຄອງ ແລະ ນໍາໃຊ້ ລະບົບບັນທຶກຂໍ້ມູນຂ່າວສານ ທາງເອເລັກໂຕຣນິກ ກ່ຽວກັບ ຄວາມປອດໄພ ຂອງຕ່ອງໂສ້ການຜະລິດອາຫານ ພ້ອມທັງເຜີຍແຜ່ໃຫ້ ສາທາລະນະຊົນ ຮັບຊາບ ເປັນແຕ່ລະໄລຍະ;
4. ດໍາເນີນການກວດກາ ຜະລິດຕະພັນສັດ ແລະ ສັດນໍ້າ ທີ່ໄດ້ຕິດ ກຄຜສ ໃນຮູບແບບຕ່າງໆ ຕາມ ລະບຽບການກວດກາທີ່ໄດ້ກໍານົດ;
5. ແຕ່ງຕັ້ງ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ ພະນັກງານວິຊາການແຕ່ລະຂັ້ນທີ່ກ່ຽວຂ້ອງ ເພື່ອຊ່ວຍໃນ ການພັດທະນາ, ກວດກາ, ຕິດຕາມ ວຽກງານ ກຄຜສ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
6. ໂຄສະນາເຜີຍແຜ່ ແລະ ປູກຈິດສໍານຶກ ໃຫ້ແກ່ ທຸກພາກສ່ວນໃນສັງຄົມ ກ່ຽວກັບ ວຽກງານ ກຄຜສ ໂດຍປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
7. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ວຽກງານ ກຄຜສ;

8. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ວຽກງານ ກຄຜສ ໂດຍສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
9. ພົວພັນຮ່ວມມືກັບ ຂະແໜງການ, ອົງການ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບ ກຄຜສ;
10. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານ ກຄຜສ ໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
11. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ**

ໃນການຄຸ້ມຄອງ ແລະ ກວດກາ ກຄຜສ ຂະແໜງລ້ຽງສັດແລະ ການປະມົງ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນິຕິກຳ, ບົດແນະນຳ, ມາດຕະຖານເຕັກນິກ, ຄູ່ມື ກ່ຽວກັບ ວຽກງານ ກຄຜສ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ໄປສູ່ການຈັດຕັ້ງປະຕິບັດ ຢູ່ພາຍໃນແຂວງຂອງຕົນ;
2. ຄຸ້ມຄອງ, ນຳໃຊ້ ແລະ ສະໜອງຂໍ້ມູນເຂົ້າສູ່ ລະບົບບັນທຶກຂໍ້ມູນຂ່າວສານ ທາງເອເລັກໂຕຣນິກ ກ່ຽວກັບ ຄວາມປອດໄພຂອງຕ່ອງໂສ້ການຜະລິດອາຫານ ທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ ພ້ອມທັງແຈ້ງຂໍ້ມູນໃຫ້ ສາທາລະນະຊົນ ຮັບຊາບ ເປັນແຕ່ລະໄລຍະ;
3. ດຳເນີນການກວດກາ ຜະລິດຕະພັນສັດ ແລະ ສັດນ້ຳ ທີ່ໄດ້ຕິດ ກຄຜສ ພາຍໃນແຂວງ ແລະ ນະຄອນຫຼວງ ຕາມລະບຽບການ ທີ່ ກົມລ້ຽງສັດ ແລະ ການປະມົງ ກຳນົດ;
4. ແຕ່ງຕັ້ງພະນັກງານວິຊາການຂັ້ນແຂວງ ເພື່ອຮັບຜິດຊອບຕິດຕາມ, ກວດກາວຽກງານ ກຄຜສ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
5. ປະສານສົມທົບກັບ ອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຂັ້ນແຂວງ ໃນການຈັດຕັ້ງປະຕິບັດວຽກງານ ກຄຜສ ໃຫ້ມີປະສິດທິພາບ;
6. ໂຄສະນາເຜີຍແຜ່ ນິຕິກຳ ແລະ ເອກະສານທາງດ້ານເຕັກນິກ ພ້ອມທັງປູກຈິດສຳນຶກ ໃຫ້ແກ່ທຸກພາກສ່ວນ ກ່ຽວກັບ ວຽກງານ ກຄຜສ ພາຍໃນແຂວງ ແລະ ນະຄອນຫຼວງ;
7. ຕິດຕາມກວດກາການຈັດຕັ້ງປະຕິບັດ ວຽກງານ ກຄຜສ ຂອງຂັ້ນເມືອງ;
8. ຮັບ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ບັນຫາ ກຄຜສ ຕາມການແບ່ງຂັ້ນຄຸ້ມຄອງ;
9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ກຄຜສ ໃຫ້ ກົມລ້ຽງສັດ ແລະ ການປະມົງ ແລະ ອົງການປົກຄອງທ້ອງຖິ່ນ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງໜ່ວຍງານ ລ້ຽງສັດ ແລະ ການປະມົງ ຂັ້ນເມືອງ**

ໃນການຄຸ້ມຄອງ ແລະ ກວດກາ ກຄຜສ ໜ່ວຍງານລ້ຽງສັດ ແລະ ປະມົງ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ບັນດານິຕິກຳ, ບົດແນະນຳ, ມາດຕະຖານເຕັກນິກ ແລະ ຄູ່ມື ກ່ຽວກັບ ວຽກງານ ກຄຜສ ຢູ່ຂັ້ນເມືອງ;
2. ຄຸ້ມຄອງ, ນຳໃຊ້ ແລະ ສະໜອງຂໍ້ມູນເຂົ້າສູ່ ລະບົບບັນທຶກຂໍ້ມູນຂ່າວສານ ທາງເອເລັກໂຕຣນິກ ກ່ຽວກັບ ຄວາມປອດໄພຂອງຕ່ອງໂສ້ການຜະລິດອາຫານ ພ້ອມທັງແຈ້ງຂໍ້ມູນ ໃຫ້ສາທາລະນະຊົນ ຮັບຊາບ ເປັນແຕ່ລະໄລຍະ;
3. ດຳເນີນການກວດກາຜະລິດຕະພັນສັດ ແລະ ສັດນ້ຳ ທີ່ໄດ້ຕິດ ກຄຜສ ຢູ່ຂັ້ນເມືອງຂອງຕົນ;

4. ແຕ່ງຕັ້ງ ພະນັກງານວິຊາການຂັ້ນເມືອງ ເພື່ອຮັບຜິດຊອບ ການກວດກາ, ຕິດຕາມ ວຽກງານ ກຄຜສ;
5. ປະສານສົມທົບກັບ ອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢູ່ຂັ້ນເມືອງ ໃນການຈັດຕັ້ງປະຕິບັດ ວຽກງານ ກຄຜສ ໃຫ້ມີປະສິດທິພາບ;
6. ໂຄສະນາເຜີຍແຜ່ ນິຕິກຳ ແລະ ເອກະສານທາງດ້ານເຕັກນິກ ພ້ອມທັງປູກຈິດສຳນຶກ ໃຫ້ແກ່ ທຸກພາກສ່ວນ ກ່ຽວກັບ ວຽກງານ ກຄຜສ ຢູ່ຂັ້ນເມືອງ;
7. ຮັບ ແລະ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ບັນຫາ ກຄຜສ ຕາມ ການແບ່ງຂັ້ນຄຸ້ມຄອງ;
8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານ ກຄຜສ ໃຫ້ ຂະແໜງລ້ຽງສັດ ແລະ ການປະມົງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
9. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ ດັ່ງນີ້:

1. ໃນກໍລະນີ ມີການລະເມີດທີ່ມີລັກສະນະເບົາບາງ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ;
2. ຖ້າເປັນເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ມີການລະເມີດ ຊຶ່ງບໍ່ເປັນ ການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍ ແລະ ບໍ່ຈິງໃຈລາຍງານ ຈະຖືກລົງວິໄນ ຕາມກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ;
3. ຖ້າບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະທາງແພ່ງ ເປັນຕົ້ນ ກໍ່ຄວາມເສຍຫາຍ ໃຫ້ແກ່ ຜົນປະໂຫຍດ ຂອງລັດ, ລວມໝູ່, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນ ຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ;
4. ໃນກໍລະນີ ທີ່ມີການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

### ມາດຕາ 28 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝຕາມກໍລະນີ ດັ່ງນີ້:

1. ມອບ, ໂອນ ຫຼື ໃຫ້ ຜູ້ອື່ນທີ່ບໍ່ໄດ້ຮັບອະນຸຍາດ ນຳໃຊ້ ກຄຜສ ຂອງຕົນເອງ ຈະຖືກປັບໃໝ ຫ້າສິບ ສ່ວນຮ້ອຍ ຂອງມູນຄ່າສິນຄ້າ ແລະ ຮັບຜິດຊອບມູນຄ່າເສຍຫາຍ ທີ່ເກີດຈາກການກະທຳຜິດ;
2. ນຳໃຊ້ ກຄຜສ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ໄດ້ມີການສຶກສາອົບຮົມມາແລ້ວ ແຕ່ຍັງກະທຳຜິດຊ້ຳ ຈະຖືກປັບໃໝໜຶ່ງເທົ່າຕົວ ຂອງມູນຄ່າສິນຄ້າ ແລະ ຮັບຜິດຊອບມູນຄ່າເສຍຫາຍ ທີ່ເກີດຈາກການກະທຳຜິດ;
3. ປອມແປງ ກຄຜສ, ຕິດ ກຄຜສ ໃສ່ຜະລິດຕະພັນສັດ ຫຼື ສັດນ້ຳ ທີ່ບໍ່ໄດ້ມາດຕະຖານ ຈະຖືກປັບໃໝ ສອງເທົ່າຕົວ ຂອງມູນຄ່າສິນຄ້າ ແລະ ຮັບຜິດຊອບມູນຄ່າເສຍຫາຍ ທີ່ເກີດຈາກການກະທຳຜິດ;

4. ນຳໃຊ້ສານທີ່ເປັນອັນຕະລາຍ ຫຼື ສານທີ່ຕ້ອງຫ້າມ ປະສົມລົງໃນ ຜະລິດຕະພັນສັດ ຫຼື ສັດນ້ຳ ທີ່ໄດ້ຮັບ ກຄຜສ ຈະຖືກປັບໃໝ ສາມເທົ່າຕົວ ຂອງມູນຄ່າສິນຄ້າ ແລະ ຮັບຜິດຊອບມູນຄ່າເສຍຫາຍທີ່ເກີດຈາກການກະທຳຜິດ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນໃຈກາງ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

**ຮສ. ປອ ລີນຄຳ ດວງສະຫວັນ**